ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ກົມຄຸ້ມຄອງທະນາຄານທຸລະກິດ

ເລກທີ 543/ກຄທ

ນະຄອນຫຼວງວຽງຈັນ, ວັນທີ 26 ກັນຍາ 2019

## ແຈ້ງການ

**ເຖິງ:** ທ່ານ ຜູ້ອໍານວຍການທະນາຄານທຸລະກິດ ແລະ ຜູ້ຈັດການສາຂາທະນາຄານທຸລະກິດຕ່າງປະເທດ

**ເລື່ອງ:** ການຮັບຮອງທະນາຄານທຸລະກິດເປັນທະນາຄານຕົວແບບ ເພື່ອຈັດຕັ້ງປະຕິບັດຕາມມາດຕະຖານບາເຊວ.

- ອີງຕາມແຜນແມ່ບົດ ແລະ ແຜນຈັດຕັ້ງປະຕິບັດການພັດທະນາການຄຸ້ມຄອງທະນາຄານທຸລະກິດ ຕາມມາດຕະຖານບາເຊວ ສະບັບເດືອນພະຈິກ 2017;
- ອີງຕາມໜັງສືຮັບຮອງເປັນທະນາຄານຕົວແບບ ເພື່ອຈັດຕັ້ງປະຕິບັດ ຕາມມາດຕະຖານບາເຊວ ສະບັບເລກທີ 288/ກຄທ, ລົງວັນທີ 26 ເມສາ 2019.

ກົມຄຸ້ມຄອງທະນາຄານທຸລະກິດ, ທະນາຄານແຫ່ງ ສປປ ລາວ (ທຫລ) ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ: ທຫລ ໄດ້ເຫັນດີຮັບຮອງທະນາຄານທຸລະກິດ ຈໍານວນ 5 ແຫ່ງ ເຂົ້າເປັນທະນາຄານຕົວແບບ ເພື່ອຈັດຕັ້ງປະຕິບັດ ຕາມມາດຕະຖານບາເຊວ ຊຶ່ງມີລາຍຊື່ດັ່ງລຸ່ມນີ້:

1. ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ;
2. ທະນາຄານ ລາວ-ຝຣັ່ງ ຈໍາກັດ;
3. ທະນາຄານ ລາວຈີນ ຈໍາກັດ;
4. ທະນາຄານ ເອັສທີ ຈໍາກັດ;
5. ທະນາຄານ ມາຣູຮານ ເຈແປນລາວ ຈໍາກັດ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ.

ຮັກສາການ. ຫົວໜ້າກົມ

ໂພທິຈັນ ທໍາມະເທວາ

ທະນາຄານແຫ່ງ ສປປ ລາວ, ຖະໜົນ ຍອນເນ, ນະຄອນຫຼວງວຽງຈັນ, ຕູ້ໄປສະນີ 19, ໂທລະພິມ: 4304 **BNL.VTE.LS**
ໂທລະສານ: (856)-21-213108 ໂທລະສັບ: 213109-213110 **Email: BOL@bol.gov.la; www.bol.gov.la**